ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 44 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 26 ຕຸລາ 2018

ສຳນັກງານ ຄຄຊ
... 1128
ວັນທີ 31 OCT 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 08-12/10/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,75% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດ ອາເມລິກາ ອອກມາບໍ່ດີເປັນຕົ້ນ: ຈຳນວນປະຊາຊົນທີ່ຂໍສະຫວັດດີການຫວ່າງງານ ໃນອາທິດທີ 06/10/2018 ເພີ່ມຂຶ້ນມາຢູ່ໃນຈຳນວນ 214,000 ຄົນ ຈາກຈຳນວນ 207,000 ຄົນໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 01-05/10/2018 | ອາທິດນີ້ 08-12/10/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1493 | 1,1580 | -0,75% |
| ເຢນ/ໂດລາ | 113,88 | 112,30 | 1,41% |
| ບາດ/ໂດລາ | 32,880 | 32,750 | 0,40% |
| ເປໂຊ/ໂດລາ | 54,29 | 54,09 | 0,38% |
| ຣູເປັຍ/ໂດລາ | 15.185,00 | 15.200,00 | 0,10% |
| ໂດລາສິງກະໂປ/ໂດລາ | 1,3826 | 1,3773 | 0,38% |
| ຢວນ/ໂດລາ | 6,8697 | 6,9243 | -0,79% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 3,82% ເປັນ 71,66 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນໃນລະດັບທີ່ຫຼຸດລົງມາຢູ່ 5,99 ລ້ານບາເຣວ ໃນອາທິດທີ 05/10/2018 ຈາກທີ່ເຄີຍເພີ່ມຂຶ້ນຮອດລະດັບ 7,97 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ເພີ່ມຂຶ້ນ 1,55% ເປັນ 1.220,29 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,16% ແຕ່ແຂງຄ່າຂຶ້ນ 0,33% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,68% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,14% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 05/10/2018 | | | ອາທິດນີ້ 12/10/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8,599,86 | 8.628,83 | 8.616,12 | 8,615,93 | 8.643,94 | 8.630,16 | -0,19% | -0,17% | -0,16% | -3,65% | -3,67% | -3,68% |
| ບາດ | 267,22 | 268,60 | 268,07 | 265,60 | 268,61 | 267,20 | 0,61% | -0,003% | 0,33% | -4,98% | -4,41% | -4,14% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,79% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 10,85%;
- ປະລິມານເງິນ M2 ຫຼຸດລົງ 0,24% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,91%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (05-11/10/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 7,98 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 16,55 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 24,53 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 259,03 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 215,78 ລ້ານບາດ ແລະ ຂາຍເງິນບາດໄດ້ 474,81 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 29,11% ແຕ່ເງິນບາດ ຫຼຸດລົງ 12,49%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 6,50 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 40,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2,80 ລ້ານໂດລາ ແລະ ເງິນບາດ ຈຳນວນ 109,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 28/9-04/10/2018 | | ອາທິດນີ້ 08-12/10/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **19.64** | **340.95** | **16.55** | **215.78** | **-38.01%** | **-43.34%** |
| - ທ/ຄທຸລະກິດລັດ | 6.92 | 38.43 | 5.05 | 147.56 | -43.45% | 203.00% |
| - ທ/ຄທຸລະກິດອື່ນໆ | 12.72 | 302.52 | 11.50 | 68.22 | -35.28% | -79.46% |
| **2. ການຂາຍເງິນຕາຕ່າງປະເທດ** | **28.34** | **347.89** | **24.53** | **474.81** | **-21.50%** | **16.29%** |
| - ທ/ຄທຸລະກິດລັດ | 10.17 | 105.75 | 9.57 | 244.17 | -20.12% | 113.85% |
| - ທ/ຄທຸລະກິດອື່ນໆ | 18.17 | 242.14 | 14.96 | 230.64 | -22.37% | -21.59% |
| **ຊື້-ຂາຍສຸດທິ ທທກ** | **-8.70** | **-6.94** | **-7.98** | **-259.03** | **75.38%** | **842.96%** |
| - ຜິດດ່ຽງຊື້-ຂາຍ | -44.30% | -2.04% | -48.22% | -120.04% | 182.97% | 1564.96% |
| **- ມູນຄ່າການຊື້-ຂາຍ** | **47.98** | **688.84** | **41.08** | **690.59** | **-29.11%** | **-12.49%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-10.82** | **-44.09** | **-6.50** | **-40.00** | | |
| - ທຫລ ຊື້ຈາກ ທທກ | 1.70 | 100.00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 12.52 | 144.09 | 6.50 | 40.00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **4.50** | **55.00** | **2.80** | **109.50** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 10/2018 ຄາດວ່າຈະຢູ່ໃນລະດັບ 3,18%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ຫຼຸດລົງ 11,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 47,53 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 7,60% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 40,13 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 538 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 187 ສະບັບ ເທົ່າກັບ 25,79% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 414,69 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 66,65 ຕື້ກີບ ເທົ່າກັບ 13,85%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (05-11/10/2018) ມີທັງໝົດ 3.595 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.558 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 37 ຕື້ກີບ ຈາກ 975,37 ຕື້ກີບ ມາເປັນ 1,012,82 ຕື້ກີບ ເທົ່າກັບ 3,83%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 37 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 36,32 ຕື້ກີບ ຈາກ 82,35 ຕື້ກີບ ມາເປັນ 118,67 ຕື້ກີບ ເທົ່າກັບ 44,10%.

4. **ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 847,35 ຈຸດ ຫຼຸດລົງ ຈາກ 878,34 ຈຸດ ຫຼື ເທົ່າກັບ 3,53% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 363.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,69 ຕື້ກີບ ເພີ່ມຂຶ້ນ 101,11% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 63,59% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ BCEL, EDL-Gen, SVN ແລະ LAT. ສ່ວນສາເຫດຂອງການເພີ່ມຂຶ້ນຂອງປະລິມານການຊື້-ຂາຍແມ່ນມາຈາກມີການຊື້-ຂາຍຮຸ້ນຂອງ BCEL ແລະ EDL-Gen ເພີ່ມຂຶ້ນ 272,80% ແລະ 214,11% ຕາມລຳດັບ ເນື່ອງຈາກການເຂົ້າມາຊື້ຫຼາຍຂອງຜູ້ລົງທຶນພາຍໃນ ແລະ ຂາຍອອກໂດຍຜູ້ລົງທຶນຕ່າງປະເທດ.

➢ **ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 39.500 | 221.275.000 | 5.650 | **147.200** | **824.915.000** | **5.600** | 272,66 | 272,80 | -0,88 |
| **EDL-GEN** | 61.500 | 260.695.000 | 4.350 | **196.600** | **818.865.000** | **4.150** | 219,67 | 214,11 | -4,60 |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | 9.400 | 13.160.000 | 1.400 | **2.200** | **3.090.000** | **1.400** | -76,60 | -76,52 | - |
| **SVN** | - | - | | - | - | **1.500** | - | - | -6,25 |
| **PCD** | 100 | 120.000 | 1.200 | **200** | **240.000** | **1.200** | 100,00 | 100,00 | - |
| **LCC** | - | - | 1.900 | - | - | **1.900** | - | - | - |
| **MHTL** | 123.400 | 343.655.000 | 2.800 | **15.500** | **44.150.000** | **2.850** | -87,44 | -87,15 | 1,79 |
| **LAT** | 3.100 | 2.810.000 | 900 | **1.700** | **1.530.000** | **850** | -45,16 | -45,55 | -5,56 |
| ທັງໝົດ | 237.000 | 841.715.000 | | **363.400** | **1.692.790.000** | | 53,33 | 101,11 | |

5. **ວຽກງານອື່ນໆທີ່ພົ້ນເດັ່ນ.**

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມສ່ອງແສງສາຍພັກ ແລະ ສາຍລັດປະຈຳເດືອນ ກັນຍາ 2018, ❷ ກອງປະຊຸມປະຈຳປີ 2018 ຂອງກອງທຶນການເງິນສາກົນ ທີ່ປະເທດອິນໂດເນເຊຍ, ❸ ກອງປະຊຸມສຳມະນາກ່ຽວກັບການຟອກເງິນ, ອາຊະຍາກຳເລັກໂຕນິກ ແລະ ການປະກອບຄຳເຫັນໃສ່ (ຮ່າງ) ກົດໝາຍວ່າດ້ວຍຄ່າທຳນຽມ ສະບັບປັບປຸງ, ❹ ກອງປະຊຸມສຳມະນາ ສ້າງຄວາມເຂັ້ມແຂງໃຫ້ຜູ້ພິພາກສາ ສານປະຊາຊົນສູງສຸດ ແລະ ❺ ພິທີເປີດສົກຮຽນໃໝ່ ແລະ ສະເຫຼີມສະຫຼອງວັນຄູແຫ່ງຊາດ;

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຈາກ❶ ຄະນະທີມງານຈາກສະຖາບັນການເຕີບໂຕສີຂຽວໂລກ ແລະ ❷ ຄະນະຜູ້ບໍລິຫານ ບໍລິສັດ ເອີນ ແອນ ຢັງລາວ ຈຳກັດ;

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ຕຸລາ ປີ 2018 ທີ່ ຫສນຍ, ❷ ກອງປະຊຸມປຶກສາຫາລືຮ່າງຂໍ້ຕົກລົງວ່າດ້ວຍການກູ້ຢືມຈາກຕ່າງປະເທດຂອງທະນາຄານ, ❸ ກອງປະຊຸມປຶກສາຫາລືກ່ຽວກັບການກຳນົດທິດທາງໃນການສ້າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບການຊຳລະ, ❹ ເຂົ້າຮ່ວມກອງປະຊຸມຄົບຄະນະຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ປະຈຳປີ 2018, ❺ ກອງປະຊຸມຄະນະກະກຽມກອງປະຊຸມ 2 ຝ່າຍ ກັບທະນາຄານແຫ່ງປະເທດໄທ, ❻ ເຂົ້າຮ່ວມງານຖະແຫຼງຂ່າວຢ່າງເປັນທາງການກ່ຽວກັບການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງເມືອງວຽງໄຊ-ຖານທີ່ໝັ້ນຂອງການປະຕິວັດລາວ ຄົບຮອບ 50 ປີ ທີ່ ຫໍປະຊຸມແຫ່ງຊາດ.

ຮ. ຫົວໜ້າຫ້ອງການ

ສຸກັນ ຈັນທະວົງ